# ບົດໃຫ້ນັກຂ່າວ
# ກອງປະຊຸມຜູ້ຖືຮຸ້ນສາມັນ ທຄຕລ ປະຈໍາປີ 2017
# ຄັ້ງວັນທີ 27/04/2018

ຕອນບ່າຍຂອງວັນທີ 27/04/2018 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2017 ຂອງຕົນຂຶ້ນ ທີ່ຫໍປະຊຸມແຫ່ງຊາດ ຫລັກ 6, ນະຄອນຫຼວງວຽງຈັນ. ກອງປະຊຸມໄດ້ດໍາເນີນພາຍໃຕ້ການເປັນປະທານຂອງທ່ານ ຄໍາສຸກ ສູນດາລາ ຮອງປະທານສະພາບໍລິຫານ ທຄຕລ ໂດຍມີການເຂົ້າຮ່ວມຂອງບັນດາຜູ້ຖືຮຸ້ນ ທຄຕລ ນໍາໂດຍ ທ່ານ ສີລາ ວຽງແກ້ວ ຮອງລັດຖະມົນຕີກະຊວງການເງິນ ແລະ ທ່ານ ພູທະນູເຜັດ ໄຊສົມບັດ ຫົວໜ້າກົມສ່ວຍສາອາກອນ ເຊິ່ງຕາງໜ້າຮຸ້ນຂອງລັດຖະບານຢູ່ ທຄຕລ 70%, ມີຜູ້ຕາງໜ້າທະນາຄານຄູ່ຮ່ວມຍຸດທະສາດ (COFIBRED) ທີ່ຖືຮຸ້ນ ທຄຕລ 10% ແລະ ຍັງມີຜູ້ຖືຮຸ້ນ ທຄຕລ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມເປັນຈໍານວນຫລາຍ. ກອງປະຊຸມໄດ້ດໍາເນີນໄປຢ່າງສອດຄ່ອງກັບລະບຽບການດໍາເນີນກອງປະຊຸມ ທີ່ ສຄຄຊ ກໍານົດໃຫ້ ແລະ ທັງສອດຄ່ອງກັບບັນດາ ນິຕິກໍາກ່ຽວຂ້ອງ. ໃນການພິຈາລະນາແຕ່ລະວາລະ ທ່ານປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ແກ່ຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ຊັກຖາມ ແລະ ປະກອບຄໍາຄິດເຫັນໃນແຕ່ລະບັນຫາຢ່າງກົງໄປກົງມາ ເປັນຕົ້ນແມ່ນບັນຫາທີ່ຕິດພັນກັບການດໍາເນີນງານຂອງ ທຄຕລ ໃນປີ 2017 ເຊິ່ງກໍໄດ້ຮັບການຊີ້ແຈງຈາກຄະນະປະທານກອງປະຊຸມ ຢ່າງຈະແຈ້ງ.

ກອງປະຊຸມ ໄດ້ພິຈາລະນາຮັບຮອງເອົາບັນຫາສໍາຄັນໆຫລາຍບັນຫາ ກ່ຽວກັບ ການດໍາເນີນງານໄລຍະຜ່ານມາ ແລະ ບັນດາເປົ້າໝາຍທິດທາງແຜນການຂອງ ທຄຕລ ໃນອານາຄົດ ເຊັ່ນ:

▪ ລາຍງານສະພາບພົ້ນເດັ່ນໃນການດໍາເນີນງານຂອງ ທຄຕລ ໃນປີ 2017 ເຊິ່ງເຫັນວ່າ ໄດ້ພ້ອມກັນພິຈາລະນາຮັບຮອງເອົາຜົນການດໍາເນີນທຸລະກິດ ທີ່ໄດ້ຜ່ານການກວດສອບຕາມມາດຖານສາກົນໂດຍຜູ້ກວດສອບອິດສະຫຼະ, ຜົນສໍາເລັດການອອກຮຸ້ນສາມັນເພີ່ມທຶນຈໍານວນ 360 ຕື້ກີບ, ການປ່ຽນແປງສັດສ່ວນຖືຄອງຮຸ້ນ ຂອງນັກລົງທຶນ-ຜູ້ຖືຮຸ້ນ ພາຍໃນ ແລະ ຕ່າງປະເທດ ໃຫ້ສາມາດຖືຄອງຮຸ້ນໃນສັດສ່ວນລວມກັນບໍ່ເກີນກວ່າ 20%. ພ້ອມກັນນັ້ນ, ກໍ່ໄດ້ເພີ່ມສິດການຖືຄອງຮຸ້ນສໍາລັບບຸກຄົນ ແລະ ນິຕິບຸກຄົນ ໃຫ້ສາມາດຖືຄອງຮຸ້ນໄດ້ຈາກລາຍລະບໍ່ເກີນ 1% ມາເປັນ 2%. ໄດ້ດໍາເນີນຈັດຕັ້ງປະຕິບັດໂຄງການຕ່າງໆ ເພື່ອແນໃສ່ຈໍາກັດຄວາມສ່ຽງທຸກດ້ານຕາມຫຼັກການບາເຊວ 2, ເພີ່ມທະວີການຂະຫຍາຍ ພັດທະນາຜະລິດຕະພັນໃຫ້ມີຄວາມຫລາກຫລາຍ ແລະ ມີຄວາມທັນສະໄໝຍິ່ງຂຶ້ນ, ຂະຫຍາຍເຄືອຂ່າຍບໍລິການໃຫ້ກວ້າງຂວາງ. ທັງໝົດນັ້ນ, ໄດ້ເຮັດໃຫ້ຜົນການດໍາເນີນທຸະກິດຂອງ ທຄຕລ ລື່ນແຜນການຫລາຍດ້ານ. ທີ່ພົ້ນເດັ່ນແມ່ນ ສາມາດສ້າງກໍາໄລກ່ອນອາກອນ ໄດ້ສູງເຖິງ 373 ຕື້ກວ່າກີບ ຈາກແຜນການເດີມທີ່ວາງໄວ້ 250 ຕື້ກີບ ແລະ ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໄດ້ເພີ້ມຂຶ້ນ ເປັນ 712 ກີບ ຕໍ່ ຮຸ້ນ ເມື່ອທຽບກັບປີ 2016 ຜ່ານມາ ທີ່ໄດ້ຈ່າຍເງິນປັນຜົນພຽງ 614 ກີບ ຕໍ່ ຮຸ້ນ, ເຖິງແມ່ນວ່າ ຈໍານວນຮຸ້ນ ທຄຕລ ໄດ້ເພີ່ມຂຶ້ນຈໍານວນຫລາຍໃນປີ 2017 ກໍ່ຕາມ.

▪ ກອງປະຊຸມ ຍັງໄດ້ພິຈາລະນາ ແລະ ຮັບຮອງສະມາຊິກສະພາບໍລິຫານ ທຄຕລ ຊຸດໃໝ່ ເພື່ອປ່ຽນແທນຊຸດເກົ່າ ທີ່ໄດ້ຄົບວາລະແລ້ວເຊິ່ງສະພາບໍລິຫານຊຸດໃໝ່ນີ້ ຈະໄດ້ປະຕິບັດໜ້າທີ່ສໍາຄັນ ເພື່ອຍົກສູງບົດບາດ ທຄຕລ ໃຫ້ສູງຍິ່ງຂຶ້ນ ແລະ ຮັບປະກັນໄດ້ຜົນປະໂຫຍດຜູ້ຖືຮຸ້ນທັງໝົດ ແລະ ມີກໍານົດວາລະ 2 ປີ ໃນໄລຍະແຕ່ປີ 2018 ເຖິງປີ 2020.

▪ ນອກຈາກນີ້ ກອງປະຊຸມ ກໍ່ໄດ້ຮັບຮອງເອົາແຜນການສຳຄັນຂອງທຄຕລ ປະຈຳປີ 2018 ຄື: ຈະໄດ້ສືບຕໍ່ ບັນດາໂຄງການພັດທະນາສຳຄັນໆຫລາຍດ້ານ, ຮັບພະນັກງານໃໝ່ທົ່ວລະບົບຈຳນວນ 216 ຄົນ, ຂະຫຍາຍຕາໜ່າງບໍລິການເພີ່ມ 1 ສາຂາ ແລະ 9 ໜ່ວຍບໍລິການໃນທົ່ວປະເທດ, ການປັບປຸງກົດລະບຽບການພາຍໃນຂອງ ທຄຕລ, ການກຳນົດທິດທາງປັບປຸງໂຄງສ້າງຜູ້ຮຸ້ນຄືນໃໝ່ ໂດຍຈະຫຼຸດສັດສ່ວນການຖືຄອງຮຸ້ນຂອງລັດຖະບານ ກໍຄືບ້ວງຖືຮຸ້ນຂອງກະຊວງການເງິນລົງຕື່ມ 19%.

▪ ໃນປີ 2018 ທຄຕລ ໄດ້ວາງເປົ້າໝາຍຕົວເລກຜົນການດຳເນີນທຸລະກິດໃຫ້ສູງຂຶ້ນໃນແຕ່ລະດ້ານ ເມື່ອທຽບໃສ່ຕົວເລກທີ່ປະຕິບັດໄດ້ໃນປີ 2017 ຄື: ຍອດຊັບສິນ ໃຫ້ເພີ່ມຂຶ້ນ 9%, ຍອດເງິນຝາກໃຫ້ເພີ່ມຂຶ້ນ 5%, ຂະຫຍາຍເງິນກູ້ ໃຫ້ເພີ່ມຂຶ້ນ 8%. ສຳຄັນກວ່ານັ້ນ, ແມ່ນໄດ້ຕັ້ງເປົ້າໝາຍສ້າງລາຍຮັບໃຫ້ເພີ່ມສູງຂຶ້ນ ແນໃສ່ໃຫ້ມີກຳໄລກ່ອນອາກອນບັນລຸໄດ້ 400 ຕື້ກີບ.

ໝາຍເຫດ : ນັກຂ່າວ ສາມາດລົງຂ່າວ ເປີດເຜີຍໄດ້ນັບແຕ່ວັນທີ 26/04/2018 ເປັນຕົ້ນໄປ